ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໙໔/ປພຖຊ/໐໔໔໙໑໐**

# ຖແລງການ

## ສນັບສນູນຄຳອວຍພອນ ຂອງປະທານປະເທດ.

ພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ, ມີຄວາມຮູ້ສຶກ ດີໃຈ ແລະຊາບຊຶ້ງ ໃນຄຳອວຍໄຊຍໃຫ້ພອນປີໃໝ່ລາວ ພສ.2553 ຂອງທ່ານ ຈູມມະລີ ໄຊຍະສອນ ປະທານປະເທດທີ່ສົ່ງກວມໄປເຖິງ ຄົນລາວໃນຕ່າງປະເທດ. -ພ້ອມໆກັບຄຳອວຍໄຊຍໃຫ້ພອນນັ້ນ, ທ່ານກໍຍັງໄດ້ຮຽກຮ້ອງໃຫ້ຄົນລາວ ທັງໃນແລະນອກປະເທດ ໄດ້ມີຄວາມສາມະຄີເປັນນ້ຳໜຶ່ງໃຈດຽວກັນ ໃຫ້ນັບວັນນັບຫລາຍຂຶ້ນ. ອັນນີ້, ມັນກໍເປັນນິມິຕໝາຍອັນດີ ບົ່ງບອກເຖິງຄວາມເປັນຫ່ວງເປັນໃຍ ຂອງທ່ານ ຕໍ່ອະນາຄົດຂອງປະເທດຊາດ ແລະຄົນລາວທັງມວນອີກດ້ວຍ, ຊຶ່ງບໍ່ເຄີຍໄດ້ຍິນມາກ່ອນເລີຍ!.

ຄຳຮຽກຮ້ອງຂອງທ່ານ ໃນຕອນນຶ່ງ ວ່າ " **ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງ ພີ່ນ້ອງຮ່ວມຊາດ ໃນທົ່ວປະເທດ, *ກໍຄືຊາວລາວ ທີ່ຢູ່ໃນຕ່າງປະເທດ* ຈົ່ງເພີ້ມທະວີຄວາມສາມະຄີ ເປັນປຶກແຜ່ນແໜ້ນໜາ, ເຊີດຊູ ນ້ຳໃຈຮັກຊາດ, ຄວາມເປັນເອກຣາດ, ເປັນເຈົ້າຕົນເອງ ແລະສ້າງຄວາມເຂັ້ມແຂງພາຍໃນຊາດ**".

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄື ປະຊາຊົນລາວທັງຊາດ, ໄດ້ທຳການຕໍ່ສູ້ເພື່ອສ້າງຄວາມສາມະຄີປອງດອງຊາດ ຕາມແນວທາງສັນຕິວິທີມາໂດຍຕລອດ, ຢາກໃຫ້ມີການ ປະສານງານຮ່ວມ ຣະຫວ່າງລາວສອງຝ່າຍ ເກີດມີຂຶ້ນ ຢ່າງເປັນຮູບພຣະທັມ ເພື່ອພ້ອມກັນແກ້ໄຂບັນຫາຊາດ ທີ່ມີຢູ່ໃຫ້ສຳເຣັດລົງໂດຍໄວ. ພ້ອມກັນ ສ້າງເມືອງລາວຄືນໃໝ່ ໃຫ້ມີຄວາມຈເຣີນສີວິໄລ ກ້າວໜ້າທັນສມັຍ

ແລະຢູ່ເຢັນເປັນສຸຂໄປຮອດ ຊົ່ວຟ້າກາລະນານ. ພວກເຮົາຕໍ່ສູ້ ເພື່ອສິດທິເສຣີພາບປະຊາທິປະໄຕ, ປະເທດຊາດຕ້ອງມີຄວາມເປັນເອກຣາດແລະປະຊາຊົນ ຕ້ອງມີຄວາມເປັນເອກພາບກັນ, ຈະແມ່ນຢູ່ພາຍໃນ ຫລືນອກປະເທດ ກໍແມ່ນຄົນເຊື້ອຊາດລາວເໝືອນກັນ.

ການຕໍ່ສູ້ ຂອງພວກເຮົາ ໄດ້ສືບຕໍ່ພາຣະກິດຊາດອັນສູງສົ່ງ ຈາກວິຣະບຸຣຸສຂອງລາວ, ຄື ສົມເດັດເຈົ້າເພັຊຣາດ ຜູ້ນຳພາຂບວນການ **ລາວອິສຣະ** ຕໍ່ສູ້ ເພື່ອທ້ອນໂຮມລາວ ໃຫ້ເປັນອັນນຶ່ງອັນດຽວກັນ; ແຕ່ຍັງບໍ່ທັນສຳເຣັດ. ຍ້ອນວ່າ " **ຈິດໃຈການຕໍ່ສູ້ ຂອງລາວອິສຣະນັ້ນ, ແມ່ນ ລາວລວມລາວ, ບໍ່ແມ່ນ ລາວໂຮມວຽດ ຄືດັ່ງການປະກາດ ໂຮມລາວ ຄັ້ງທີ 3 ປີ 1975 ນັ້ນຈັກດີ້!**. ການໂຮມລາວຄັ້ງນັ້ນ. ມັນແມ່ນ **ພັກປະຊາຊົນປະຕິວັດລາວ ໂຮມກັບວຽດນາມ** ແລະປະກາດຂາຍຊາດຕົນເອງ ໂດຍໃຊ້ **ສັນຍາ ມິຕພາບ ລາວ-ວຽດ**". ສນັ້ນ, ມັນຈຶ່ງໄດ້ສ້າງຄວາມຜິດຫວັງອັນໃຫຍ່ຫລວງ ໃຫ້ແກ່ນັກຣົບວິຣະຊົນລາວອິສຣະ ໃນອາດີດ, ໃຫ້ແກ່ອ້າຍເອື້ອຍນ້ອງ ໃນຄຸ້ນແຄວປະຕິວັດ, ໃຫ້ແກ່ນັກປະຕິວັດອາວຸໂສ ແລະປະຊາຊົນລາວທັງຊາດອີກດ້ວຍ.

ເຖິງຢ່າງໃດກໍຕາມ, ພວກເຮົາ ຂໍສັລເສີນນ້ຳໃຈຮັກຊາດ ເສັຽສລະກ້າຫານ ຂອງປະທານປະເທດ ທີ່ອອກມາ ຮຽກຮ້ອງ ໃຫ້ພີ່ນ້ອງຮ່ວມຊາດ ທັງໃນແລະນອກປະເທດ ໄດ້ເພີ້ມທະວີຄວາມສາມະຄີ ໃຫ້ເປັນປຶກແຜ່ນແໜ້ນໜາ; ເຊີດຊູນ້ຳໃຈຮັກຊາດ ຄວາມເປັນເອກຣາດ ເປັນເຈົ້າຕົນເອງ ແລະສ້າງຄວາມເຂັ້ມແຂງ ພາຍໃນຊາດ; ບົນຈິດໃຈດັ່ງກ່າວ, ພວກເຮົາປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ, ໄດ້ປະຕິບັດຕາມຈິດໃຈ ຂອງຄວາມເປັນຊາດເອກຣາດນີ້ ຢ່າງບໍ່ໄດ້ດ່າງພ້ອຍ ມາໂດຍຕລອດ ເພື່ອສ້າງຊາດໃຫ້ໝັ້ນຄົງ ປະຊາຊົນດຳ ຣົງສຸຂ, ທຸກຄົນມີເສຣີ, ບັຖພີຣົ່ມເຢັນ.

ປະຊາຊົນມີໄຊຍ ເສຣີປະຊາທິປະໄຕຮຸ່ງອາດ ຊາດລາວຈົ່ງຈເຣີນ.

ຂໍຂອບໃຈ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ຫ້ອງການປະທານພັກ**

**ອາຈານ ສົມນຶກ ຟອງສູວັນ**

**ວັນທີ ໒໘ ເມສາ ໒໐໑໐.**